# ໂຮງຮຽນວັນອາທິດ

## ວັນອາທິດ ທີ 24 ມີນາ 2019 (03-24-2019 )

## ບັນຫາກ່ຽວກັບການງານ

ທ່ານມີຄວາມຊົງຈຳອັນໃດທີ່ກ່ຽວກັບການທຳງານມື້ທຳອິດຂອງທ່ານ?

**ຈຸດສຳຄັນໃນບົດຮຽນນີ້:**ການງານຂອງເຮົາມີຄວາມໝາຍຂຶ້ນອີກເມື່ອເຮົາເຮັດສຳເຣັດດ້ວຍຄວາມສັດຊື່ຕໍ່ພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ໃນແຕ່ລະເດືອນ. ມີຄົນປະມານສິບສີ່ລ້ານຄົນໃນທົ່ວໂລກຟັງວິທະຍຸ ສຽງເສຣີລີນິຍົມ ( NPR), ຂ້າພະເຈົ້າສ້າງ ກາຍ ເຣສ ໄດ້ຢ່າງໃດ.  ແຕ່ລະຂັ້ນຕອນໄດ້ເພງຄວາມສົນໃຈໃສ່ກັບການຮູ້ຈັກຜົນຜະລິດຫຼືທາງທຸຣະກິດ. ກາຍ ເຣສ ໃຫ້ສັມພາດຜູ້ຈັດລະບົບການຜະລິດຫຼືບໍຣິຫານເພື່ອສົນທະນາວ່າ ເຂົາສ້າງຄວາມສຳເຣັດໃຫ້ແກ່ບໍຣິສັດຂອງເຂົາຢ່າງໃດ.ນຶ່ງໃນຫຼາຍຂໍ້ໄດ້ປຽບສິດທິພິເສດທີ່ສຳຄັນໃນການອາສັຍຢູ່ໃນສະຫະຣັດອະເມຣິກາ ແມ່ນຄວາມສາມາດເລີ້ມຕົ້ນທຸຣະກິດໃນກາຣາຈອດຣົດຂອງທ່ານໄດ້ ( ບໍຣິສັດເອໂປຄອມພິວເຕີ).  ບ້ານຂອງທ່ານ ( ແອດຊີ), ຫຼື ແມ່ນກະທັ້ງທຳການຜະລິດອອກຈາກຣົດບັນທຸກຂອງທ່ານ (ພາຍໃຕ້ສິ່ງປ້ອງກັນ). ຫຼາຍບໍຣິສັດເຫຼົ່ານີ້ແມ່ນປ່ຽນໄປຕາມສະພາບຈາກບັນຫາ ບໍ່ມີຫຍັງໝົດມາສູ່ຄວາມສຳເຣັດເປັນບໍຣິສັດທີ່ທຳເງິນໄດ້ມາກກວ່າຫຼາຍລ້ານດອນລາ.

ແມ່ນແລ້ວ, ທີ່ນັ້ນມີຄວາມຫຍຸ້ງຍາກແທ້ ຊຶ່ງບໍ່ໄດ້ສຳຄັນວ່າຈະເປັນຜົນສຳເຣັດຫຼືຜົນການຜະລິດຂອງທ່ານ ທ່ານຈະຕ້ອງປ່ອຍປະງານໜັກໄວ້ໃນມືຂອງຄົນອື່ນຫຼັງຈາກທີ່ທ່ານອອກໄປ.  ໜ້າເສົ້າໃຈ, “70% ຄົນຮັ່ງມີທີ່ເຮົາຮູ້ຈັດສູນເສັຽຊັບສົມບັດໃຫ້ຄົນລຸ້ນທີສອງ,  ແລະໜ້າປລາດໃຈ 90% ສູນເສັຽໃນລຸ້ນທີສາມ"  ແມ່ນຫຍັງເປັນຈຸດໝຸ້ງໝາຍຂອງການເຮັດງານນັ້ນຖ້າຈະຕ້ອງຈາກມັນໄປ ປະທຸກສິ່ງໄວ້ໃນມືຜູ້ທີ່ໃຊ້ຈ່າຍຢ່າງຟູມເຟືອຍ.

**ພຣະຄັມພີກ່າວວ່າຢ່າງໃດ?**  ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

**1. <u>ປັນຍາຈານ  2:18-23</u>**

*18 ຂ້າພະເຈົ້າກຽດຊັງວຽກງານທັງໝົດຂອງຂ້າພະເຈົ້າຊຶ່ງຂ້າພະເຈົ້າເຮັດວຽກໜັກຈົນໝົດເຫື່ອແຮງຢູ່ພາຍໃຕ້ດວງຕາ*
*ເວັນ ເພາະຂ້າພະເຈົ້າຈຳຕ້ອງປະວຽກນັ້ນໄວ້ໃຫ້ແກ່ຄົນທີ່ມາພາຍຫລັງຂ້າພະເຈົ້າ. 19 ແລ້ວໃຜຈະໄປຮູ້ວ່າຄົນນັ້ນຈະ*
*ເປັນຄົນມີສະຕິປັນຍາຫລືຄົນໂງ່  ປານນັ້ນລາວກໍຄອບຄອງບັນດາການງານຂອງຂ້າພະເຈົ້າ ທີ່ຂ້າພະເຈົ້າໄດ້ເຮັດຈົນ*
*ໝົດເຫື່ອແຮງມາແລະທີ່ຂ້າພະເຈົ້າໃຊ້ສະຕິປັນຍາເຮັດພາຍໃຕ້ດວງຕາເວັນ. ອັນນີ້ກໍບໍ່ໄດ້ຜົນ.  20 ຂ້າພະເຈົ້າຈຶ່ງອັດ*
*ອັ້ນຕັນໃຈຫລາຍເຖິງເຣື່ອງການງານທັງໝົດຂອງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າເຮັດຈົນໝົດເຫື່ອແຮງພາຍໃຕ້ດວງຕາເວັນ*
*21 ດ້ວຍວ່າມີຄົນທີ່ເຮັດວຽກໂດຍໃຊ້ສະຕິປັນຍາຄວາມຮູ້ແລະຄວາມຊຳນານ   ແຕ່ແລ້ວກໍປະວຽກນັ້ນໃຫ້ເປັນສ່ວນ*
*ຂອງອີກຄົນໜຶ່ງທີ່ບໍ່ໄດ້ອອກແຮງເຮັດວຽກນັ້ນ ອັນນີ້ກໍບໍ່ໄດ້ຜົນ ແລະຊົ່ວຮ້າຍຫລາຍ.  22 ເພາະວ່າລາວໄດ້ຫຍັງຈາກ*
*ບັນດາວຽກງານອັນໜັກໜ່ວງແລະຄວາມທຸກຣະທົມໃນໃຈທີ່ລາວຕ້ອງເຮັດພາຍໃຕ້ດວງຕາເວັນ 23ດ້ວຍວ່າວັນເດືອນ*
*ປີທັງຫລາຍຂອງລາວມີແຕ່ຄວາມເຈັບປວດ ແລະກິດທຸຣະຂອງລາວກໍ່ຄວາມສລົດໃຈ ຕອນກາງຄືນຈິດໃຈຂອງລາວກໍ*
*ບໍ່ຢຸດພັກສງົບ ອັນນີ້ກໍບໍ່ໄດ້ຜົນດ້ວຍ.*

ແຍກອອກຈາກພຣະເຈົ້າແລະທີ່ຢູ່ຊົ່ວນິຣັນດອນ, ການເບິ່ງເຫັນຮູບພາບແນວຄວາມຄິດຣາຊອານາຈັກພຣະເຈົ້າແລ້ວ, ໂຊໂລໂມນເກີດເບື່ອໜ່າຍທັງໝົດການງານທີ່ລາວພະຍາຍາມເຮັດແລະທຸກຜົນສຳເຣັດທີ່ໄດ້ຮັບ: ການສ້າງພຣະວິຫານ, ການສ້າງສວນ, ແລະຕລອດຮອດການສະສົມຊັບສົມບັດ (ປັນຍາຈານ 2:4-8). ລາວໃຫ້ສອງເຫດຜົນ:

1. ***ທ່ານບໍ່ສາມາດເອົາມັນໄປກັບທ່ານໄດ້.*** ໂຊໂລໂມນເປັນກະສັດເປັນເວລາສີ່ສິບປີ ( 1 ກະສັດ 11: 42 ). ແລະຂະນະບິດາຂອງລາວດາວິດໄດ້ນຳອິສຣາເອນທັງໝົດໃຫ້ພົ້ນຈາກຄວາມຕາຍຈາກມີສັດຕຣູ (1 ກະສັດ 5: 3- 4), ແຕ່ບັດນີ້ໂຊໂລໂມນຜູ້ມີຄວາມສງົບສຸກທົ່ວປະເທດ ສ້າງເຢຣູຊາເລັມໃຫ້ເປັນເມືອງທີ່ສຳຄັນຮຸ່ງເຮືອງດ້ວຍພຣະວິຫານນະມັສການພຣະເຈົ້າ ( 6- 7). ແມ່ນແລ້ວ, ທັງໝົດທີ່ລາວເຮັດ, ໂຊໂລໂມນຮູ້ແນ່ໃນໃຈວ່າລາວບໍ່ສາມາດເອົາມັນໄປກັບລາວໄດ້.

ເມື່ອທ່ານເບິ່ງເຫັນວ່າວຽກງານບໍ່ຄົງຢູ່ຖາວອນເປັນຂອງທ່ານ, ທ່ານຈະທົດສອບເບິ່ງວ່າມັນເປັນຄວາມກຽດຄ້ານຫຼືການຫຼິງໃຫຼຢ່າງບໍ່ມືນຫູມືນຕາ. ເມື່ອວຽກງານຂອງທ່ານບໍ່ມີຈຸດປະສົງເປົ້າໝານຢູ່ໃນໂລກນີ້, ທ່ານອາດຈະລອງເຮັດຫຼິ້ນເບິ່ງເລັກໆນ້ອຍໆເທົ່າທີ່ເປັນໄປໄດ້ບໍ, ເຮັດໃຫ້ໄດ້ເງິນພຽງພໍຢູ່ໄດ້. ເປັນຫຍັງຈຶ່ງຈະເຮັດງານໜັກຖ້າທ່ານຮູ້ວ່າທ່ານເອົາຫຍັງໄປບໍ່ໄດ້? ບຸກຄົນທີ່ດຳລົງຊີວິດຈາກທັສນະຄະຕິແບບນີ້ຈະກຽດຊັງວຽກຂອງລາວ ເພາະລາວຮູ້ສຶກເບື່ອໜ່າຍຫຼືເຮັດໄປໂດຍບໍ່ມີຈຸດໝາຍ.

ການມົວເມົານຳວຽກຢ່າງບໍ່ມືນຫູມືນຕາແມ່ນກົງກັນຂາມກັນກັບການຈຳໃຈເຮັດດ້ວຍຄວາມກຽດຄ້ານ; ສິ່ງນີ້ເກີດຂຶ້ນເມື່ອທ່ານມົວເມົາຢູ່ນຳວຽກຂອງທ່ານແລະໃຫ້ມັນເປັນພຣະເຈົ້າຂອງທ່ານ. ຖ້າຊີວິດນີ້ມີທີ່ນີ້, ການທຳງານຫຼາຍຊົ່ວໂມງເພື່ອທ່ານຈະສາມາດສະສົມເງິນໄວ້ໄດ້ເທົ່າທີ່ເຮັດໄດ້ ເພື່ອທ່ານຈະສາມາດດຳລົງຊີວິດຢູ່ໃນຄວາມສຸກສະບາຍແລະເຫັນແກ່ຕົນເອງໃນລະຫວ່າງຊີວິດອັນສັ້ນໆຂອງທ່ານ. ບຸດຄົນທີ່ກຳລັງດຳລົງຊີວິດຢູ່ໃນແນວຄວາມຄິດອັນນີ້ຈະເບື່ອໜ່າຍຕໍ່ວຽກຂອງລາວເພາະມັນກາຍມາເປັນເຈົ້ານາຍຂອງລາວແລະມັນຄວບຄຸມຊີວິດຂອງລາວ,

2. ***ທ່ານບໍ່ສາມາດໄວ້ວາງໃຈລູກເມື່ອທ່ານຈາກໄປ.*** ສິ່ງນຶ່ງທີ່ໃຊ້ໃນການທົດສອບໃນການເປັນຜູ້ນຳຄືມີຫຍັງເກີດຂຶ້ນເມື່ອທ່ານບໍ່ຢູ່ນັ້ນ. ທຸກສິ່ງຈະດຳເນີນງານເປັນປົກກະຕິດີຂະນະຖ້າພວກເຮົາຍັງຢູ່ທີ່ນັ້ນຫຼືບໍ່ຢູ່ ທຸກສິ່ງດີຂຶ້ນຫຼືບໍ່ດີ? ຖ້າພວກເຮົາສຸມໃຈໃສ່ພຽງແຕ່ກໍ່ສ້າງຕົວເອງໃຫ້ປະສົບຜົນສຳເຣັດ, ພວກເຮົາກໍຄືຜູ້ທີ່ບໍ່ຈັດຕຽມຄົນອື່ນໃຫ້ພ້ອມທີ່ຈະສືບທອດຕໍ່.

ດ້ວຍຄວາມຮູ້ສຶກນັ້ນ, ເຮົາຈຶ່ງບໍ່ເຊື່ອໝັ້ນຄົນອື່ນວ່າຈະເຮັດດີໄດ້ຄືກັນກັບເຮົາ ພາຍຫຼັງລົງທຶນໄປຫຼາຍປີໃນຊີວິດການເຮັດງານຂອງພວກເຮົາ, ພວກເຮົາເຝົ້າເບິ່ງນັ້ນ “ລູກຂ້າພະເຈົ້າ.” ເຖິງຢ່າງໃດກໍຕາມ ທີ່ຕາມມາທີຫຼັງເຮົາແນ່ນອນຈະບໍ່ເຫັນໃນທຳນອງນັ້ນ, ແລະສ່ວນຫຼາຍຮູ້ສຶກວ່າເຂົາເຮັດບໍ່ໄດ້ດີດັ່ງທີ່ຕັ້ງໃຈ ຫຼືມີຄວາມຊຽວຊານດັ່ງພວກເຮົາເຮັດ. ນັ້ນເປັນສິ່ງທີ່ໂຊໂລໂມນພົບເຫັນໃນຕົວລາວເອງ. ລາວຮູ້ວ່າລາວຈະຕ້ອງມອບວຽກທີ່ລາວພະຍາຍາມເຮັດທັງໝົດໃຫ້ກັບຜູ້ທີ່ມາພາຍຫຼັງລາວ. ແຕ່ລາວໄດ້ຕັ້ງຄຳຖາມວ່າ, “ຜູ້ໃດຈະຮູ້ວ່າລາວເປັນຜູ້ມີຄວາມສລາດຫຼືໂງ່?” ນີ້ແມ່ນຂາດຄວາມໝັ້ນໃຈໃນຜູ້ຕິດຕາມມາ ອາດສາມາດເຮັດໃຫ້ເຮົາຜິດຫວັງທີ່ມັນໄດ້ເກີດຂຶ້ນກັບໂຊໂລໂມນ. “ຂ້າພະເຈົ້າເລີ່ມຮູ້ສຶກຕົວເອງເໝືອນຜູ້ສິ້ນຫັວງ.”

ອີກດ້ານນຶ່ງ, ເມື່ອພວກເຮົາເຮັດເໝືອນກັບວ່າວຽກຂອງເຮົາເປັນສິ່ງຄົງຢູ່ຊົ່ວນິຣັນ, ຄວາມຄິດພຣະເຈົ້າ, ພວກເຮົາຈະມີຄວາມຮູ້ສຶກມີຄວາມຮັບຜິດຊອບທີ່ຈະຊ່ວຍບຸກຄົນເຫລົ່ານັ້ນທີ່ມາພາຍຫຼັງເຮົາ. ພວກເຮົາຄວນຊອກຫາຜູ້ສືບທອດທີ່ດີໃຫ້ບໍຣິຫານພຣະພອນຂອງພຣະພຣະເຈົ້າທີ່ມອບຄວາມໄວ້ວາງໃຈໄວ້ກັບພວກເຮົາ. ອິດທິພົນຄວາມຄິດຊ່ວຍພວກເຮົາໃຫ້ຫຼີກລ້ຽງການສົງສັຍລັກສະນະທ່າທາງຕໍ່ຜູ້ທີ່ຮັບຜິດຊອບວຽກຕໍ່ຈາກເຮົາ. ແລະຈື່ງຈຳໄວ້ວ່າວຽກຂອງເຮົາບໍ່ໄດ້ເປັນວຽກທີ່ເຮັດດ້ວຍຄວາມຍາກລຳບາກ “ ພາຍໃຕ້ດວງຕາເວັນ.” ມີພຽງເມື່ອພວກເຮົາທຳງານດ້ວຍຄວາມສັດຊື່ຕໍ່ພຣະຄຣິດໂດຍການເຮັດງານເໝືອນເຮັດຢູ່ພາຍໃຕ້ອົງພຣະຜູ້ເປັນເຈົ້າວຽກຂອງເຮົາຈຶ່ງຈະເກີດຜົນ(ໂກໂລຊາຍ 3: 23-24)

## 2. ປັນຍາຈານ 3:9-13

*9 ຄົນງານໄດ້ກຳໄລຫຍັງຈາກການງານຂອງຕົນ? 10 ຂ້າພະເຈົ້າເຫັນພາຣະຊຶ່ງພຣະເຈົ້າປະທານໃຫ້ມະນຸດເຮັດຢູ່ນັ້ນ. 11 ພຣະອົງກະທຳໃຫ້ສັບພະທຸກສິ່ງງົດງາມຕາມລະດູການຂອງມັນ ພຣະອົງບັນຈຸຄວາມນິຣັນດອນໄວ້ໃນຈິດໃຈຂອງມະນຸດ ແຕ່ມະນຸດຍັງເບິ່ງບໍ່ເຫັນວ່າ ພຣະເຈົ້າກະທຳຫຍັງໄວ້ຕັ້ງແຕ່ຕົ້ນເດີມຈົນອາຣະສຸດປາຍ. 12 ຂ້າພະເຈົ້າຮູ້ແລ້ວວ່າສຳລັບພວກເຂົາບໍ່ມີຫຍັງທີ່ຈະດີໄປກວ່າຄວາມຊົມຊື່ນຍິນດີ ແລະເຮັດການດີຕລອດຊີວິດ. 13 ແລະເປັນຂອງປະທານຈາກພຣະເຈົ້າແກ່ມະນຸດທີ່ຈະໃຫ້ມະນຸດໄດ້ກິນດື່ມ ແລະມ່ວນຊື່ນໃນບັນດາການງານຂອງພວກເຂົາ.*

ໂຊໂລໂມນໄດ້ຖາມຄຳຖາມຂໍ້ນີ້ງບາງທີພວກເຮົາທັງໝົດອາດຖາມຄຳຖາມອັນດຽວກັນຫຼືແຕກຕ່າງກັນ: " ລາວໄດ້ຜົນປໂຍດອັນໃດຈາກການດີ້ນລົນຕໍ່ສູ້ເຮັດງານຂອງລາວ?" ການດີ້ນລົນຕໍ່ສູ້ເປັນພຽງຫຼາຍກ່ວາການເຮັດງານໜັກຂອງປະຣິມານຄົນຫຼືເຄື່ອງຈັກເຮັດງານໄດ້ໃນແຕ່ລະວັນ. ຄຳເວົ້າທີ່ນຳຄວາມໝາຍຂອງຄຳວ່າຍາກ, ເຮັດວຽກທຸກ. ການເຮັດງານບໍ່ໄດ້ເປັນບັນຫາ. ການງານແມ່ນຂອງປະທານຈາກພຣະເຈົ້າ ( ປັນຍາຈານ 5: 19). ພຣະເຈົ້າມອບວຽກໃຫ້ອາດາມເຮັດ. ແລະພຣະອົງໄດ້ມອບໜ້າທີ່ວຽກງານໃຫ້ກ່ອນຄຳສາບແຊ່ງຂອງຄວາມບາບທີ່ເຂົ້າມາ (ປະຖົມມະການ 2:15). ແຕ່ຕຳແໜ່ງທີ່ສຳຄັນຂອງຄວາມບາບແມ່ນການເຮັດວຽກຂອງເຮົາກາຍມາເປັນ " ວຽກໜັກ" ( ປະຖົມມະການ 3:17). ບັນຫາແມ່ນວຽກຂອງເຮົາກາຍມາເປັນການຕໍ່ສູ້.

ການດີ້ນລົນຕໍ່ສູ້ນີ້ອາດກໍໃຫ້ເກີດຄວາມບໍ່ພໍໃຈແລະແມ່ນກະທັ້ງເຮັດໃຫ້ກຽດຊັງວຽກ.ແຕ່ດຽວນີ້ໂຊໂລໂມນໄດ້ແນະນຳສິ່ງທີ່ຢູ່ຊົ່ວນິຣັນດອນ, ຄວາມຄິດພຣະເຈົ້າ. ຜ່ານທາງຄວາມຈິງຕອນນີ້ແລະແຫຼ່ງທີ່ມາທີ່ສຳຄັນນີ້ໄດ້ຮັບທັດສະນະແນວຄວາມຄິດທີ່ສົມບູນຂອງວຽກຂອງເຮົາເປັນເໝືອນຂອງປະທານຈາກພຣະເຈົ້າ. ຄວາມຈິງເຫຼົ່ານີ້ສາມາດເຮັດໃຫ້ປ່ຽນແປງວຽກໜັກຂອງເຮົາເປັນວຽກທີ່ສັດຊື່ໃນພຣະເຈົ້າ.

- **ການຄວບຄຸມດູແລຢູ່ໃນພຣະເຈົ້າ.** ພວກເຮົາມັກຈະເປັນຜູ້ດູແລຄອບຄຸມຊີວິດຂອງເຮົາເອງ, ມີແຕ່ພຣະເຈົ້າພຽງເທົ່ານັ້ນເປັນຜູ້ປົກຄອງດູແລສູງສຸດ. ຕອນຕົ້ນບົດ 3 ປັນຍາຈານ. ໂຊໂລໂມນເນັ້ນເຖິງລະດູການແລະການໝູນວຽນຂອງຊີວິດ ( ຂໍ້ 1- 8). ພວກເຮົາບໍ່ສາມາດຄອບຄຸມເຫດການເຫຼົ່ານີ້, ເຊັ່ນໃນມື້ທີ່ເຮົາເກີດຫຼືມື້ທີ່ເຮົາຕາຍ.

ແທນທີ່ຂອງທັສນະຄວາມຄິດຂອງທາງໂລກເວລານັ້ນແລະຊີວິດບໍ່ມີຄວາມໝາຍ, ພວກເຮົາເຊື່ອໄວ້ວາງໃຈການຄຸ້ມຄອງຂອງພຣະເຈົ້າຢູ່ເໜືອສາລະພັດສິ່ງທັງໝົດ. ຂະນະທີ່ເຮົາເຊື່ອໄວ້ວາງໃຈໃນພຣະທັດຂອງພຣະເຈົ້າພວກເຮົາຄວນພະຍາຍາມປຸກຈິດໃຈຂຶ້ນຜ່ານທາງການທົດລອງແລະຄວາມຫຍຸ້ງຍາກ.

ເພາະພວກເຮົາເຊື່ອວາງໃຈພຣະເຈົ້າ, ທີ່ພວກເຮົາສາມາດເຊື່ອນັ້ນ " ງານໜັກນັ້ນພຣະເຈົ້າໄດ້ມອບໃຫ້ກັບລູກຫຼານຂອງອາດາມ ເພື່ອໃຫ້ເຂົາມີຊີວິດຢູ່" ເປັນຂອງປະທານທີ່ດີ. ແລະເພາະການປົກຄອງເປັນຂອງພຣະເຈົ້າ. ວຽກທີ່ເຮົາເຮັດນັ້ນມາຈາກພຣະເຈົ້າເປັນຂອງຂວັນທີ່ດີ. ໃນໜ້າທີ່ນີ້, ຄົນຂອງພຣະເຈົ້າຈະຕ້ອງເຮັດໃຫ້ດີກັບຂອງພຣະຣາຊທານຂອງພຣະອົງດ້ວຍການຫາລ້ຽງຄອບຄົວຂອງເຮົາ, ໄດ້ຮັບໃນສິ່ງທີ່ເຮົາຕ້ອງການ, ດູແລໃນຄວາມຕ້ອງການ.

- **ພຣະເຈົ້າແຕ່ງຕັ້ງເຮົາໃຫ້ຢູ່ເໜືອໂລກນີ້.** " ພຣະອົງຍັງເອົາຊີວິດນິຣັນໃສ່ໃນຈິດໃຈເຮົາ." ພຣະອົງຊົງຮູ້ຈັກເຮົາດີບໍ່ພຽງແຕ່ໃນໂລກນີ້. ພວກເຮົາບໍ່ມີຄວາມສາມາດຊ່ວຍຕົວເອງເຮັດຫັຽງໄດ້ ມີແຕ່ຄວາມກັງວົນ, " ໃນຂໍ້ນີ້ຮູບແບບການດຳລົງຊີວິດຈະຕ້ອງມີດີຫຼາຍກວ່ານີ້!" ທ່ານເຄີຍປ່ອຍວາງການຊ່ວຍຕົວເອງໃນວຽກຂອງທ່ານແລະໃນຊີວິດຂອງທ່ານທີ່ເປັນຄວາມສຳຄັນ, ບາງສິ່ງນັ້ນ ໃນທີ່ສຸດນອກຈາກພຽງແຕ່ຈະສະແດງໃຫ້ເຫັນຊີວິດ? ພຣະເຈົ້າຈັດວາງ " ການກະຕຸ້ນ" ທີ່ຢູ່ໃນຊີວິດນັ້ນ!

ພວກເຮົາຕ້ອງການຮູ້ຖານະຕຳແໜ່ງຂອງພວກເຮົາໃນໂລກແລະໃນແຜນການຂອງພຣະເຈົ້າ, ແຕ່ພຣະອົງບໍ່ໄດ້ຊົງສຳແດງຕໍ່ເຮົາທຸກໆສິ່ງທີ່ພຣະອົງຊົງກະທຳຫຼືສິ່ງທີ່ພຣະອົງໄດ້ກະທຳແຕ່ເລີ່ມຕົ້ນຈົນຈົບ. ພຣະເຈົ້າຊົງສຳແດງໃຫ້ເຮົາຮູ້

ອັນໃດທີ່ພວກເຮົາຕ້ອງການຮູ້; ພວກເຮົາສາມາດໄວ້ວາງໃຈພຣະອົງໃນທຸກສິ່ງ, ພວກເຮົາຈຳຕ້ອງພ້ອມທີ່ຈະຍອມຮັບສິ່ງທີ່ພຣະເຈົ້າຊົງສຳແດງຕໍ່ພວກເຮົາ:

- ຜ່ານທາງອາດາມ, ນຳເອົາຄຳສາບແຊ່ງມາສູ່ພວກເຮົາໃຫ້ເຮັດງານໜັກ ພຣະເຈົ້າຊົງປະທານລູກຊາຍຂອງພຣະອົງຄືພຣະເຢຊູໃຫ້ເພື່ອຄວາມລອດພົ້ນຂອງພວກເຮົາ ແລະເພື່ອການໄຖ່ພວກເຮົາອອກຈາກການສາບແຊ່ງນີ້.
- ຜ່ານທາງການຊົງກະທຳພຣະຣາຊະກິດຂອງພຣະເຢຊູ ຊີວິດບໍຣິສຸດຂອງພຣະອົງແລະການວາຍພຣະຊົນເທິງໄມ້ກາງແຂນ ເຮັດໃຫ້ເຮົາສາມາດໄດ້ຮັບຄວາມລອດພົ້ນ ຖ້າພວກເຮົາຍອມກັບໃຈໃໝ່ອອກຈາກຄວາມບາບຂອງເຮົາ ແລະເຊື່ອໃນພຣະເຢຊູເພື່ອຈະໄດ້ຮັບຊີວິດອັນຕລອດໄປເປັນນິດ.
- ດ້ວຍຄວາມສັມພັນຂອງພວກເຮົາກັບພຣະຄຣິດ, ວຽກເຮັດງານທຳຂອງພວກເຮົາຈຶ່ງມີຈຸດປະສົງຄວາມຕ້ອງການແລະຊີວິດອັນຕລອດໄປເປັນນິດຂອງພວກເຮົາມີຄວາມໝາຍສຳຄັນ.
- ວຽກງານທີ່ເຮົາກຳລັງເຮັດຢູ່ໃນຂະນະນີ້ແມ່ນຈັດຕຽມເຮົາເພື່ອການພັກຜ່ອນ ວັນນຶ່ງພວກເຮົາຈະມີຄວາມຊົມຊື່ນຍິນດີໃນການຊົງພຣະຊົນຢູ່ຂອງພຣະເຈົ້າ.
- ພວກເຮົາຈຳຕ້ອງເຮັດວຽກງານເຮົາສຳເຣັດໃນພຣະນາມຂອງພຣະເຢຊູແລະຂອບພຣະຄຸນກັບພຣະບິດາ (ໂກໂລຊາຍ 3: 17).
- ພຣະເຈົ້າຊົງສ້າງເຮົາຂຶ້ນມາໃຫ້ມີຄວາມສຸກສົດຊື່ນໃນຊີວິດ ທີ່ພຣະອົງໄດ້ຊົງປະທານແກ່ພວກເຮົາ. ພວກເຮົາຈຳຕ້ອງຊົມຊື່ນຍິນດີໃນຄວາມສຳເຣັດ ທີ່ພຣະເຈົ້າຊົງປະທານໃຫ້ແກ່ເຮົາຜ່ານທາງວຽກງານນັ້ນເພື່ອໃຫ້ເປັນທີ່ຖວາຍກຽດແດ່ພຣະອົງ. !

## ນຳໃຊ້ໃນຊີວິດ

ເປັນໜ້າປລາດໃຈທັສນະແນວຄວາມຄິດແບບໃດທີ່ສາມາດປ່ຽນແປງເຮົາ, ຫລືບໍ່? ໃຫ້ພວກເຮົາມາພະຍາຍາມເຮັດແນວຄວາມຄິດທີ່ຖືກຕ້ອງໃນອາທິດນີ້. **ຈົ່ງພິຈາຣະນາເບິ່ງນຶ່ງຂັ້ນຕອນໃນຄຳແນະນຳຂ້າງລຸ່ມນີ້.**

- **ຈົ່ງມີຄວາມຮູ້ສຶກຂອບພຣະຄຸນ.** ຈົ່ງຍອມຮັບຮູ້ວ່າໜ້າທີ່ການງານທີ່ທ່ານມີແລະວຽກທີ່ທ່ານເຮັດນັ້ນມາຈາກພຣະເຈົ້າ. ຈົ່ງຂອບພຣະຄຸນພຣະອົງ.
- **ຢຸດພັກຜ່ອນ.** ສ້າງຄວາມດຸ່ນດ່ຽງລະວ່າງວຽກງານຂອງທ່ານກັບການພັກຜ່ອນ, ວຽກງານຂອງທ່ານແມ່ນສຳຄັນ, ແຕ່ມັນບໍ່ເຄີຍທຳລາຍທ່ານ. ກົດກັ້ນເວລາພັກຜ່ອນແຕ່ລະວັນ, ແລະຈັດວາງມື້ສຳລັບພັກຜ່ອນ.
- **ເຮັດງານເພື່ອພຣະຄຣິດ.** ພິຈາຣະນາເບິ່ງວິທີທາງທີ່ທ່ານສາມາດໃຫ້ກຽດພຣະຄຣິດແລະນຳນິມິດໝາຍຮູບແບບການເຮັດງານຂອງທ່ານ. ຢ່າພິຈາຣະນາພຽງແຕ່ສິ່ງທີ່ທ່ານເຮັດ; ພິຈາຣະນາເບິ່ງກຸ່ມຊົນທີ່ທ່ານພົວພັນນຳ. ຊອກຫາວິທີທາງຊີ້ທາງໃຫ້ເຂົາເຫັນພຣະເຢຊູຄຣິດຜ່ານທາງວຽກງານທີ່ທ່ານເຮັດ.

ຖ້າພວກເຮົາພິຈາຣະນາເບິ່ງວຽກງານຂອງທ່ານຕາມແນວຄວາມຄິດທາງໂລກ, ມັນຈະເຮັດໃຫ້ເຮົາທໍ້ໃຈແລະເກີດຄວາມວ່າງເປົ່າ. ແຕ່ເມື່ອສັງເກດເບິ່ງວຽກຂອງເຮົາກັບຊີວິດນິຣັນ, ສະຕິປັນຍາພຣະເຈົ້າ, ພວກເຮົາເຂົ້າໃຈວ່າເປັນຂອງພຣະຣາຊະທານຈາກພຣະເຈົ້າ. ໃຫ້ພວກເຮົາມາຝຶກຝົນເອົາແນວຄວາມຄິດສະຕິປັນຍາພຣະເຈົ້າ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**